ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ
BANQUE POUR LE COMMERCE EXTERIEUR LAO PUBLIC

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 23 /ທຄຕລ .ສພທ.

ນະຄອນຫຼວງວຽງຈັນ, ວັນທີ: 01 AUG 2022

# ມະຕິ
# ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝວິສາມັນ
# ຄັ້ງທີ 3 ປະຈຳປີ 2022, ວັນທີ 01/08/2022

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝວິສາມັນຄັ້ງທີ 3 ປະຈຳປີ 2022 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 15:00 ໂມງ ວັນທີ 01/08/2022 ທີ່ຫ້ອງປະຊຸມຊັ້ນ 3 ສຳນັກງານໃຫຍ່ ທຄຕລ, ໂດຍການເປັນປະທານຂອງ ທ່ານ ຄຳສຸກ ສູນດາລາ ຮອງປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານເຂົ້າຮ່ວມ ແລະ ມີຜູ້ສັງເກດການເຂົ້າຮ່ວມຈຳນວນໜຶ່ງ;

**ກອງປະຊຸມ ໄດ້ປຶກສາຫາລື ແລະ ມີມະຕິຕົກລົງ ດັ່ງນີ້:**

1. ກອງປະຊຸມ ໄດ້ຮັບຮອງການຍົກຍ້າຍ ແລະ ການແຕ່ງຕັ້ງຜູ້ບໍລິຫານຂັ້ນສູງ ຂອງ ທຄຕລ ຈຳນວນ 1 ຕຳແໜ່ງດັ່ງນີ້:

– ຮັບຮອງການຍົກຍ້າຍ ທ່ານ ຄຳພຸດ ສິດທິລາດ ຜູ້ອຳນວຍການ ທຄຕລ ໄປຮັບໜ້າທີ່ໃໝ່ຢູ່ ທະນາຄານແຫ່ງ ສປປ ລາວ.

– ຮັບຮອງການແຕ່ງຕັ້ງ ທ່ານນາງ ສາຍສະໝອນ ຈັນທະຈັກ, ເປັນຜູ້ອຳນວຍການ ທຄຕລ.

**ປະທານສະພາບໍລິຫານ**
**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**

ຄຳສຸກ ສູນດາລາ

ເລກທີ 01, ຖະໜົນ: ປາງຄຳ, ເມືອງ ຈັນທະບູລີ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ.ນ: 2925, ໂທລະສັບ: (856-21) 213200-1, 222495, 217904, 217898-9
ແຟັກ: (856-21) 213202, 223012, 223245. Website: http://www.bcel.com.la, E-mail: bcelhqv@bcel.com.la, SWIFT Code: COEBLALA



## ທ່ານນາງ ສາຍສະໝອນ ຈັນທະຈັກ
## ຜູ້ອຳນວຍການ

### ຊີວະປະຫວັດຫຍໍ້

ວັນເດືອນປີເກີດ : 15/03/1969
ສັນຊາດ : ລາວ
ພາສາ : ລາວ, ອັງກິດ

### ປະຫວັດການສຶກສາ

ທິດສະດີການເມືອງ: ຊັ້ນສູງ.

2007: ປະລິນຍາໂທ ສາຂາ ບໍລິຫານທຸລະກິດຕ່າງປະເທດ ຈາກປະເທດ ອົດສະຕາລີ (Flinders University, Australia).

1998: ປະລິນຍາໂທ ສາຂາ ບໍລິຫານລັດ ຈາກປະເທດ ຍີ່ປຸ່ນ (Saitama University, Japan).

1993: ປະລິນຍາໂທ ສາຂາ ເສດຖະກິດມະຫາພາກ ຈາກມະຫາວິທະຍາໄລ ກູບານ ປະເທດ ລັດເຊຍ (Kuban State University, Russia).

### ປະຫວັດການເຮັດວຽກ

08/2022-ປະຈຸບັນ: ຖືກແຕ່ງຕັ້ງເປັນຜູ້ອຳນວຍການ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ

09/2021-08/2022: ຜູ້ອຳນວຍການໃຫຍ່, ຕະຫລາດຫລັກຊັບລາວ.

2015: ຫົວໜ້າສຳນັກງານ ຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ.

04/2010: ຮອງຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫລັກຊັບ, ທະນາຄານ ແຫ່ງ ສປປ ລາວ.

2009: ຮອງຫົວໜ້າກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.

1993–1997: ພະນັກງານກົມນະໂຍບາຍເງິນຕາ, ທະນາຄານ ແຫ່ງ ສປປ ລາວ.